ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2559---- /ຫອຄ.ກຊອ

ນະຄອນຫຼວງວຽງຈັນ, ວັນທີ 07 SEP 2012

# ແຈ້ງການ

ເຖິງ: ບັນດາຫົວໜ່ວຍທຸລະກິດສົ່ງອອກ ທີ່ມີຈຸດປະສົງ ຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ບຸລິມະສິດໃນການນຳເຂົ້າ.

ເລື່ອງ: ການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດໄດ້ຮັບສິດທິພິເສດທາງດ້ານການຄ້າ ແລະ ພາສີ

- ອີງຕາມຂໍ້ຕົກລົງສະບັບເລກທີ 1880/ອຄ.ກຊອ ລົງວັນທີ 5 ກັນຍາ 2012 ວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ.

ເພື່ອເປັນການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວຂ້າງເທິງໃຫ້ປະກົດຜົນເປັນຈິງ ທັງເປັນການປະກອບສ່ວນຈັດຕັ້ງປະຕິບັດເນື້ອໃນຄາດໝາຍບຸກທະລຸທາງດ້ານຈິນຕະນາການ ແລະ ແກ້ໄຂບັນດາຂັ້ນຂອດດ້ານລະບອບລະບຽບການທີ່ເປັນອຸປະສັກຫຍຸ້ງຍາກຕໍ່ການດຳເນີນທຸລະກິດຢູ່ໃນ ສປປ ລາວ ຕາມມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກໄດ້ກຳນົດໄວ້, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງບັນດາຫົວໜ່ວຍທຸລະກິດສົ່ງອອກສິນຄ້າທີ່ມີເງື່ອນໄຂໄດ້ຮັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງສປປ ລາວ ຊາບວ່າ:

ນັບແຕ່ວັນທີ 1 ຕຸລາ 2012 ເປັນຕົ້ນໄປ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຈະໄດ້ຢຸດເຊົາການບໍລິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດປະເພດ Form A (ສຳລັບຜະລິດຕະພັນທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 1 ມາດຕາ 7 ຂອງດຳລັດເລກທີ 228/ນຍ, ລົງວັນທີ 22/4/2010), Form D, Form S, Form AI, Form DFTP ແລະ Form APTA ແລະ ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະ

ຄອນຫຼວງວຽງຈັນ ເປັນຜູ້ສືບຕໍ່ອອກ ແລະ ຄຸ້ມຄອງ. ສຳລັບ Form A ທີ່ບໍ່ແມ່ນຜະລິດຕະພັນທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ ແມ່ນໃຫ້ສືບຕໍ່ພົວພັນເອົານຳກົມການນຳເຂົ້າ ແລະ ສົ່ງອອກຄືເກົ່າ.

ບັນດາບໍລິສັດ, ໂຮງຈັກໂຮງງານ ແລະ ຫົວໜ່ວຍທຸລະກິດທີ່ຢູ່ນະຄອນຫຼວງວຽງຈັນທີ່ມີຈຸດປະສົງຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດດັ່ງກ່າວຂ້າງເທິງ ໃຫ້ໄປພົວພັນເອົາຢູ່ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນໂດຍກົງ. ສຳລັບບັນດາບໍລິສັດ, ໂຮງຈັກໂຮງງານ ແລະ ຫົວໜ່ວຍທຸລະກິດທີ່ຢູ່ທ້ອງຖິ່ນ ແມ່ນໃຫ້ໄປພົວພັນເອົານຳພະແນກ ອຸດສາຫະກຳ ແລະ ການຄ້າ ຂອງແຂວງທີ່ຕົນສັງກັດຢູ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດ ແລະ ທົ່ວເຖິງ.

ຫົວໜ້າ ຫ້ອງການ
ກະຊວງ ອຸດສາຫະກຳ ແລະ ການຄ້າ

ບຸນຖອງ ໂສພາວັນດີ

**ບ່ອນສົ່ງ:**

- ຫ້ອງວ່າການລັດຖະບານ ເພື່ອຕາງລາຍງານ
- ລັດຖະມົນຕີວ່າການ ແລະ ລັດຖະມົນຕີຊ່ວຍວ່າການ ເພື່ອຕາງລາຍງານ
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເພື່ອແຈ້ງຕໍ່ໃຫ້ບັນດາຫົວໜ່ວຍທຸລະກິດ